ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຊາວໜຸ່ມ ທຫລ ສຳມະນາການຄຸ້ມຄອງຕາມຫຼັກການບາເຊວ





ໜ່ວຍຊາວໜຸ່ມກົມຄຸ້ມຄອງທະນາຄານທຸລະກິດທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດສຳມະນາການຄຸ້ມຄອງທະນາຄານທຸລະກິດຕາມຫຼັກການ ຫຼື ມາດຕະຖານບາເຊວໃນວັນທີ 9 ຕຸລາ 2020 ທີ່ ຫ້ອງປະຊຸມ ທຫລ ໂດຍການເປັນປະທານຂອງ ສະຫາຍ ຈິນດາໄມ ວິໄລທົງສ໌ ເລຂາຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ ໂດຍມີຜູ້ເຂົ້າຮ່ວມຈາກບັນດາໜ່ວຍຊາວໜຸ່ມ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.

ການສຳມະນາຄັ້ງນີ້ເປັນຂະບວນການດ້ານວິຊາສະເພາະເພື່ອສ້າງຄວາມຮູ້-ຄວາມເຂົ້າໃຈໃຫ້ແກ່ບັນດາສະມາຊິກຊາວໜຸ່ມຮາກຖານ ທຫລ ກ່ຽວກັບຄວາມເປັນມາ ແລະ ຄວາມໝາຍຄວາມສຳຄັນຂອງມາດຕະຖານບາເຊວ ຊຶ່ງເປັນມາດຕະຖານສາກົນທີ່ກຳນົດບັນດາຫຼັກການໃນການຄຸ້ມຄອງທະນາຄານທຸລະກິດໃຫ້ມີປະສິດທິພາບ ແລະ ຄວາມປອດໄພເຊິ່ງເປັນວຽກງານການຄຸ້ມຄອງທະນາຄານທຸລະກິດ ທີ່ນອນໃນ 3 ເສົາຄ້ຳເປັນວຽກງານຍຸດທະນາສາດຂອງ ທຫລ ດ້ານການຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ; ຄຽງຄູ່ກັບການຄຸ້ມຄອງສະເຖຍລະພາບເງິນຕາແຫ່ງຊາດ ແລະ ການຄຸ້ມຄອງລະບົບຊຳລະສະສາງ ເພື່ອປະກອບສ່ວນເຂົ້າໃນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ສະນັ້ນ, ເພື່ອຮັບປະກັນການຄຸ້ມຄອງທະນາຄານທຸລະກິດດັ່ງກ່າວ ທຫລ ແມ່ນກຳລັງຜັນຂະຫຍາຍຕາມມາດຕະຖານບາເຊວ II ໂດຍມີຄະນະພັດທະນາການຄຸ້ມຄອງທຸລະກິດຕາມມາດຕະຖານບາເຊວເປັນຜູ້ຮັບຜິດຊອບ ຊຶ່ງປັດຈຸບັນໄດ້ສຳເລັດການສ້າງ “ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ” ເຊິ່ງໄດ້ສັງລວມຕີລາຄາສະພາບການຄຸ້ມຄອງທະນາຄານໃນປັດຈຸບັນ-ໄລຍະຜ່ານມາ ແລະ ກຳນົດແຜນການພັດທະນາວຽກງານຄຸ້ມຄອງທະນາຄານທຸລະກິດໃນຕໍ່ໜ້າຂອງ ທຫລ ເຊິ່ງເປັນປະໂຫຍດໃຫ້ແກ່ການບັນດາສະຫາຍຊາວໜຸ່ມກໍຄືພະນັກງານ ທຫລ ໃນການຍົກລະດັບຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບສະພາບ ແລະ ທິດທາງການປ່ຽນແປງຂອງຂະແໜງການທະນາຄານຂອງ ສປປ ລາວ ໃຫ້ເລິກເຊິ່ງຍິ່ງຂຶ້ນ.

ຜ່ານການເຂົ້າຮ່ວມຮັບຟັງສຳມະນາການໃຫ້ຄວາມຮູ້ກ່ຽວກັບ “ການຄຸ້ມຄອງທະນາຄານທຸລະກິດຕາມຫຼັກການ ຫຼື ມາດຕະຖານບາເຊວ” ເປັນໄລຍະເວລາເຄິ່ງວັນເຫັນວ່າບັນດາສະຫາຍທີ່ເຂົ້າຮ່ວມຂະບວນການດ້ານວິຊາສະເພາະໄດ້ເປັນເຈົ້າການຮັບຟັງ, ມີຄຳຖາມ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ກັບການນຳສະເໜີຢ່າງກົງໄປກົງມາ, ເຮັດໃຫ້ຂະບວນການດ້ານວິຊາສະເພາະໃນຄັ້ງນີ້ມີບັນຍາກາດອັນຟົດຟື້ນ.

**#ຂ່າວ ແລະ ພາບ: ນາງ ປາໄນ ພົນທະລາ**